ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 196 /ຈທວ.ທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 10 AUG 2015

ເຖິງ: - ບັນດາພາກສ່ວນຕ່າງໆ ( ທັງພາກລັດ ແລະ ເອກະຊົນ)
- ບໍລິສັດ ເອສເອັມພີ ບໍລິການທີ່ປຶກສາດ້ານບັນຊີກວດສອບ ແລະ ແປພາສາ ຈຳກັດ
- ບໍລິສັດ ເກົ້າ ບໍລິການບັນຊີ ແລະ ກວດສອບບັນຊີ ຈຳກັດຜູ້ດຽວ
- ບໍລິສັດ ນະຄອນຫຼວງການບັນຊີ ຈຳກັດຜູ້ດຽວ
- ບໍລິສັດ ວຽງຈັນການບັນຊີ ຈຳກັດຜູ້ດຽວ
- ບໍລິສັດ ເສດຖາ ບໍລິການບັນຊີ ຈຳກັດຜູ້ດຽວ
- ບໍລິສັດ ລາວ ພັດທະນາ ບໍລິການບັນຊີ ຈຳກັດຜູ້ດຽວ

ເລື່ອງ: ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງການໂຈະການດຳເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ແລະ ການຖອນທະບຽນວິສາຫະກິດ ເລກທີ 1720/ອຄ.ຄພນ,ລົງວັນທີ 09 ກັນຍາ 2011;

ບົນພື້ນຖານໜັງສື ເລກທີ 854/ກງ.ທກ, ລົງວັນທີ 19 ມີນາ 2015, ເລື່ອງ: ພິຈາລະນາຖອນໃບທະບຽນວິສາຫະກິດ ຂອງ ບໍລິສັດ ທີ່ປຶກສາບັນຊີ ແລະ ກວດສອບ ທີ່ຢຸດເຊົາການເຄື່ອນໄຫວ. ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ໄດ້ຮັບຊາບວ່າ:

1. ວິສາຫະກິດທີ່ມີລາຍຊື່ຕາມ ຂໍ້ 06 ຂອງແຈ້ງການສະບັບນີ້ ໄດ້ຖືກໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ;
2. ກຳນົດເວລາການໂຈະເຄື່ອນໄຫວທຸລະກິດຊົ່ວຄາວ: **ເລີ່ມແຕ່ວັນທີ 11 ສິງຫາ 2015 ຫາ ວັນທີ 11 ກັນຍາ 2015;**
3. ໃນໄລຍະການໂຈະເຄື່ອນໄຫວທຸລະກິດຊົ່ວຄາວນີ້:

   3.1 ວິສາຫະກິດດັ່ງກ່າວ ຕ້ອງເຂົ້າໄປພົວພັນນຳ ກົມບັນຊີ, ກະຊວງການເງິນ ເພື່ອສະແດງເຈດຈຳນົງໃນການເຄື່ອນໄຫວທຸລະກິດ ຕາມລະບຽບການ ທີ່ຕິດພັນກັບວຽກງານ ທີ່ປຶກສາບັນຊີ ແລະ ກວດສອບ ທີ່ກະຊວງການເງິນ ວາງອອກ, ແລ້ວນຳເອກະສານຢັ້ງຢືນການສະແດງເຈດຈຳນົງດັ່ງກ່າວມາແຈ້ງຕໍ່ ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (ກະຊວງອຸດສາຫະກຳ ແລະ ການຄ້າ) ເພື່ອຊາບ;

   3.2 ຖ້າພົ້ນກຳນົດເວລາຕາມຂໍ້ 02 ຖັດເທິງນີ້ເຈົ້າໜ້າທີ່ທະບຽນວິສາຫະກິດຈະແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນ;

4. ຫ້າມວິສາຫະກິດ ເຄື່ອນໄຫວດຳເນີນທຸລະກິດຢ່າງເດັດຂາດ ແລະ ຕ້ອງນຳເອົາໃບທະບຽນວິສາຫະກິດ (ສະບັບຕົ້ນ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເກັບຮັກສາໄວ້;

5. ຖ້າລະເມີດ ຫຼື ບໍ່ປະຕິບັດຕາມແຈ້ງການສະບັບນີ້ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມ ຈະຖືກປະຕິບັດມາດຕະການຕາມມາດຕາ 212 ຂອງກົດໝາຍວ່າດ້ວຍ ວິສາຫະກິດ (ສະບັບປັບປຸງ 2013).

6. ລາຍຊື່ວິສາຫະກິດທີ່ຖືກໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ປະກອບມີ:

   1. ບໍລິສັດ ເອສເອັມພີ ບໍລິການທີ່ປຶກສາດ້ານບັນຊີກວດສອບ ແລະ ແປພາສາ ຈຳກັດ ທະບຽນວິສາຫະກິດ ເລກທີ 0649/ຈທວ, ລົງວັນທີ 03 ເມສາ 2012;
   2. ບໍລິສັດ ເກົ້າ ບໍລິການບັນຊີ ແລະ ກວດສອບບັນຊີ ຈຳກັດຜູ້ດຽວ ທະບຽນວິສາຫະກິດ ເລກທີ 1460/ຈທວ, ລົງວັນທີ 17 ທັນວາ 2008;
   3. ບໍລິສັດ ນະຄອນຫຼວງການບັນຊີ ຈຳກັດຜູ້ດຽວ ທະບຽນວິສາຫະກິດ ເລກທີ 7189/ຈທວ, ລົງວັນທີ 15 ກໍລະກົດ 2009;
   4. ບໍລິສັດ ວຽງຈັນການບັນຊີ ຈຳກັດຜູ້ດຽວ ທະບຽນວິສາຫະກິດ ເລກທີ 0541/ຈທວ, ລົງວັນທີ 10 ຕຸລາ 2008;
   5. ບໍລິສັດ ເສດຖາ ບໍລິການບັນຊີ ຈຳກັດຜູ້ດຽວ ທະບຽນວິສາຫະກິດ ເລກທີ 2774/ຈທວ, ລົງວັນທີ 08 ສິງຫາ 2011;
   6. ບໍລິສັດ ລາວພັດທະນາບໍລິການບັນຊີ ຈຳກັດຜູ້ດຽວ ທະບຽນວິສາຫະກິດ ເລກທີ 0528/ຈທວ, ລົງວັນທີ 11 ກຸມພາ 2011.

ແຈ້ງມາເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເຈົ້າໜ້າທີ່ ທະບຽນວິສາຫະກິດ

ຫຸມແພງ ຄຳພາສິດ
Houmpheng KHAMPHASITH

ບ່ອນສົ່ງ

| | | |
|---|---|---|
| - | ຫ້ອງວ່າການສັດຖະບານ | 1 ສະບັບ; |
| - | ກົມບັນຊີ (ກະຊວງການເງິນ) | 1 ສະບັບ; |
| - | ສະພາການຄ້າ ແລະ ອຸດສາຫະກຳ | 1 ສະບັບ; |
| - | ຫ້ອງວ່າການນະຄອນຫຼວງ | 1 ສະບັບ; |
| - | ພະແນກອຸດສາຫະກຳ ແລະ ການຄ້າ ນວ | 1 ສະບັບ; |
| - | ສຳເນົາ | 1 ສະບັບ. |